بسم الله الرحمن الرحيم

# ມັຊຮັບຕ່າງໆທາງນິຕິສາດ (ຟິກ) ໃນອິສລາມ

# المذاهب الأربعة في الإسلام


ວັນອິດຣິສ ປະດຸກາ : ຂຽນ

**وان إدريس فادوكا : مؤلف**

ກົງຫຼາ ການແກ້ວເກົ້າສະກຸນ : ແປ

محمد نور صالح: مترجم



ສູນຮຽນຮູ້ສາສະໜາອິສລາມອີ່ໄວ

ນະຄອນຫຼວງວຽງຈັນ

06/03/2022

**Email. alehsaanlaos@gmail.com**


## ມັຊຮັບຕ່າງໆທາງນິຕິສາດ (ຟິກ) ໃນອິສລາມ

ສາສະໜາອິສລາມຄືສະສາໜາທີ່ພຣະອົງອັລລໍຫ໌ຊົງປະທານລົງມາ ເພື່ອເປັນທາງນຳແກ່ມະນຸດຊາດທຸກຍຸກທຸກສະໄໝນັບແຕ່ມະນຸດຄົນທຳອິດ ຄື ອາດຳ ຈົນຮອດມະນຸດຄົນສຸດທ້າຍທີ່ຈະເກີດຂຶ້ນມາເບິ່ງໂລກກ່ອນທີ່ຈະເຖິງວັນກິຍາມະຫ໌ (ວັນສິ້ນໂລກ) ເຖິງແມ່ນວ່າສາສະໜາອິສລາມຈະ

ຖືກເອີ້ນຕ່າງກັນໄປຕາມແຕ່ລະຍຸກສະໄໝ ແລະ ແຕ່ລະສະສາດາແຕ່ລະຄຳພີທີ່ພຣະອົງປະທານລົງມາໃຫ້ແກ່ປະຊາຊາດຕ່າງໆໃນພາສາທີ່ແຕກຕ່າງກັນ ຈົນກະທັ່ງມາຮອດປະຊາຊາດາສຸດທ້າຍຄືທ່ານສະສາດາມຸຮໍາຫມັດ (ຊ.ລ.) ທີ່ອັລລໍຫ໌ຊົງຮ້ອງວ່າສາສະໜາອິສລາມ

ຕະຫຼອດລະຍະເວລາປະມານ 23 ປີ ທີ່ສະສາດາມຸຮໍາຫມັດ (ຊ.ລ.) ໄດ້ເຮັດການເຜີຍແຜສາສະໜາອິສລາມ ທີ່ມີຮາກຖານມາຈາກຄຳພີອັັລກຸຣອານທີ່ຖືກປະທານລົງມາແກ່ທ່ານ ຮ່ວມທັ້ງແບບຢ່າງໃນການດຳເນີນຊີວິດ ແລະ ຄຳສອນຂອງທ່ານ ທີ່ເອີ້ນວ່າ ສຸນນະຫ໌ ທັ້ງສອງສິ່ງນີ້ນັບເປັນຫຼັກສຳຄັນທີ່ສຸດ ທີ່ມຸສລິມທຸກຄົນຈະຕ້ອງຢຶດເອົາເປັນແນວທາງການດຳເນີນຊີວິດ ແລະ ປະຕິບັດສາສະນະກິດ (ການເຄົາລົບພັກດີ)

ໃນຕອນທີ່ທ່ານສະສາດາມຸຮໍາຫມັດ (ຊ.ລ.) ຍັງມີຊີວິດຢູ່ ຫາກມຸສລິມມີບັນຫາບໍ່ເຂົ້າໃຈເລື່ອງໃດໆ ທີ່ເປັນຫຼັກທຳຄຳສອນ ບໍ່ວ່າຈະເປັນຈາກອັລກຸຣອານ ຫຼື ສຸນນະຫ຺ ພວກເຂົາກໍ່ຈະໄປຖາມທ່ານສະສາດາມຸຮໍາຫມັດ (ຊ.ລ.) ທ່ານກໍ່ຈະອະທິບາຍໃຫ້ຄວາມເຂົ້າໃຈຈົນກະຈ່າງໄປໄດ້ ແຕ່ຫຼັງຈາກທີ່ທ່ານສະສາດາມຸຮໍາຫມັດ (ຊ.ລ.) ໄດ້ເສຍຊີວິດໄປແລ້ວ ສິ່ງທີ່ທ່ານໄດ້ຖິ້ມເອົາໄວ້ກໍ່ຄືຄຳພີອັລກຸຣອານ ແລະ ຄຳສອນຂອງທ່ານທີ່ຖືກລວບຮ່ວມຂຶ້ນມາໂດຍບັນດາສາວົກ ຫຼື ຊໍຮາບະຫ຺ ເອີ້ນວ່າ 'ຫະດີຊ' ຄຳວ່າຫະດີຊ ໝາຍເຖິງຄຳເວົ້າ ການກະທຳ ແລະ ການຍອມຮັບໃນເລື່ອງຕ່າງໆທີ່ທ່ານສະສາດາມຸຮໍາຫມັດ (ຊ.ລ.)ເຄີຍເຮັດໄວ້ ເຊິ່ງມີຄວາມໝາຍກົງກັບຄຳວ່າ ສຸນນະຫ຺ ຫຼື ແບບຢ່າງຂອງທ່ານສະສາດາມຸຮໍາຫມັດ (ຊ.ລ.) ຕາມທີ່ເຮົາເຂົ້າໃຈກັນທຸກມື້ນີ້ ຫຼືອະທິບາຍງ່າຍໆກໍ່ຄື ຫະດີຊຄື ສຸນນະຫ໌ ຫຼື ແບບຢ່າງຂອງທ່ານສະສາດາມຸຮໍາຫມັດ (ຊ.ລ.)ທີ່ຖືກຈົດບັນທຶກຂຶ້ນມາໃນຮູບແບບຂອງຕົວອັກສອນ ຫຼື ບັນທຶກລົງໃນຕຳລາ ເຊັ່ນດຽວກັບອັລກຸຣອານ

ແຕ່ກໍ່ເປັນທຳມະດາທີ່ມະນຸດແຕ່ລະຄົນຈະມີຄວາມຄິດ ແລະ ຄວາມເຂົ້າໃຈໃນເລື່ອງຕ່າງໆທີ່ແຕກຕ່າງກັນ ເຖິງວ່າຈະໄດ້ຮັບຄຳສັ່ງທີ່ຄືກັນແຕ່ມະນຸດສອງຄົນອາດຈະເຂົ້າໃຈ ແລະ ປະຕິບັດຕາມຄຳສັ່ງອອກມາໃນຮູບແບບທີ່ແຕກຕ່າງກັນ ດ້ວຍເຫດນີ້ຈຶ່ງເຮັດໃຫ້ຕ້ອງມີຜູ້ທີ່ມີຄວາມຮູ້ໃນ

ທາງຫຼັກການສາສະໜາ ເຊັ່ນ ອັລກຸຣອານ, ຫະດິຊ ແລະ ອື່ນໆ ຕ້ອງອອກມາຕີຄວາມໝາຍຫຼືອະທິບາຍຫຼັກການຫຼືຄຳສັ່ງຕ່າງໆໃຫ້ກັບຊາວມຸສລິມທົ່ວໄປທີ່ອາດຈະບໍ່ມີຄວາມຮູ້ຄວາມເຂົ້າໃຈທີ່ລະອຽດເລິກຊຶ້ງຄືກັບບັນດາຜູ້ຮູ້ທ່ານຕ່າງໆ ທີ່ໄດ້ກ່າວມາໃນຂ້າງຕົ້ນ ຫຼື ເວົ້າງ່າຍໆວ່າ ໃນສະໄໝທີ່ທ່ານສະສາດາມຸຮຳຫມັດ (ຊ.ລ.)ມີຊີວິດຢູ່ ຖ້າຫາກມີຄຳຖາມຫຼືບັນຫາທີ່ບໍ່ເຂົ້າໃຈໃດໆ ກ່ຽວກັບເລື່ອງສະສາໜາ ຊາວມຸສລິມໃນຍຸກນັ້ນກໍ່ໄປຖາມທ່ານສະສາດາມຸຮຳຫມັດ (ຊ.ລ.)ໂດຍກົງເລີຍ ແຕ່ຕໍ່ມາເມື່ອທ່ານສະສາດາເສີຍຊີວິດໄປແລ້ວຊາວມຸສລິມໃນຍຸກຕໍ່ມາເມື່ອມີຄຳຖາມກ່ຽວກັບສະສາໜາກໍ່ຈະໄປຖາມຫາບັນດາຜູ້ມີຄວາມຮູ້ເຂົ້າໃຈອິສລາມທີ່ຫຼາຍກວ່າ ເຊິ່ງຄົນເຫຼົ່ານັ້ນຄືຜູ້ທີ່ເຄີຍໄດ້ໃຊ້ຊີວິດ ຮຽນຮູ້ ແລະ ຢູ່ຮ່ວມກັບທ່ານສະສາດາມຸຮຳຫມັດ (ຊ.ລ.) ທີ່ເຮົາເອີ້ນພວກເຂົາວ່າ ສາວົກ ຫຼື ຊໍຮາບະຫຼ໌ ຂອງທ່ານສະສາດານັ່ນເອງ

ໃນຍຸກຕໍ່ມາເມື່ອສາສະໜາອິສລາມເລີ່ມຂະຫຍາຍຕົວອອກໄປຍັງດິນແດນຕ່າງໆກວ້າງໄກຫຼາຍຂື້ນ ຜູ້ຄົນຈາກຊາດຕິພັນ ແລະ ພາສາທີ່ແຕກຕ່າງກັນຫັນມາຮັບສາສະໜາອິສລາມເພີ່ມຫຼາຍຂື້ນ ຄົນເຫລົ່ານັ້ນສ່ວນໃຫຍ່ກໍ່ບໍ່ເຂົ້າໃຈພາສາ ແລະ ວັດທະນາທຳອາຣັບລວມທັ້ງຫຼັກຄຳສອນຂອງອິສລາມຢ່າງຖ່ອງແທ້ ເຮັດໃຫ້ບັນດານັດປາດຫຼືຜູ້ຮູ້ໃນຍຸກຕໍ່ມາເຊິ່ງກໍ່ຄືບັນດາລູກຫຼານ ຫຼື ລູກສິດລູກຫາ ຂອງເຫຼົ່າຊໍາຮາບະຫຼ໌ນັ່ນເອງເຮົາເອີ້ນພວກເຂົາເຫຼົ່ານັ້ນວ່າ "ຕາບິອີນ" ພວກເຂົາທີ່ມີຄວາມຮູ້ກໍ່ໄດ້ເຮັດການສັ່ງສອນ ແລະ ຖ່າຍທອດຄວາມຮູ້ກ່ຽວກັບອິສລາມທີ່ສົ່ງຜ່ານມາຈາກທ່ານສາສະດາ ມາສູ່ເຫຼົ່າສາວົກ ຫຼື ຊໍຮາບະຫ໌ ຈົນມາເຖິງລຸ່ນຂອງພວກເຂົາໃຫ້ກັບບັນດາຊາວມຸສລິມທົ່ວໄປໄດ້ເຂົ້າໃຈໃນລາຍລະອຽດຕ່າງໆທັ້ງຫລັກການຍຶດຖືສັດທາ (ອາກີດະຫ໌) ແລະ ແນວທາງໃນການປະຕິບັດສາສະນະກິດ (ຟິກ) ທ່ານເຫຼົ່ານີ້ບາງເທື່ອກໍ່ຈະມີການຕີຄວາມ ແລະ ອັດຖະທິບາຍເລື່ອງຕ່າງໆທີ່ແຕກຕ່າງກັນໄປບ້າງຄັ້ງ ຂື້ນຢູ່ກັບຫຼັກຖານເບື້ອງຕົ້ນທີ່ແຕ່ລະຄົນໄດ້ຮັບມາ ລວມໄປເຖິງທັດສະນະທີ່ອາດຈະແຕກຕ່າງກັນໃນເລື່ອງການຕີຄວາມໝາຍ ເຮັດໃຫ້ເກີດເປັນແນວທາງ (ມັສຮັບ) ທີ່

ແຕກຕ່າງກັນ ແຕ່ມັສຮັບ ຫຼື ແນວທາງເຫຼົ່ານີ້ກໍ່ບໍ່ໄດ້ຂັດແຍ້ງກັບຈົນເຖິງຂັ້ນແຍກອອກເປັນນິກາຍຕ່າງໆ ຫາກວ່າແຕກຕ່າງກັນໃນບາງບັນຫາ (ມັສອາລະຫ໌) ແຕ່ກໍ່ຍັງຖືວ່າທຸກມັຊຮັບນັ້ນຍັງຢູ່ໃນແນວທາງທີ່ເອີ້ນວ່າ ອະລິສຸນນະຫ໌ ວັລຈະມາອະຫ໌ ໝາຍເຖິງກຸ່ມຜູ້ທີ່ຕາມແນວທາງຂອງທ່ານສະສາດາມຸຮໍາຫມັດ (ຊ.ລ.) ແລະ ຢູ່ຮ່ວມກັນເປັນຈະມາອະຫ໌ (ກຸ່ມ)

ມັຊຮັບທີ່ຖືກຍອມຮັບທາງນິຕິສາດອິສລາມ ມີ 4 ມັສຮັບ ມີດັ່ງນີ້

1. **ມັສຮັບ ຮະນາຟີ**

ຜູ້ກໍ່ຕັ້ງຄືອີມ່າມ ອະບູຮະນີຟະຫ໌ ທ່ານມີເຊື້ອສາຍຈາກຊາວເປີເຊຍ ແຕ່ທ່ານເກີດຢູ່ນະຄອກູຟະຫ໌ (ປະເທດອີຣັກໃນປະຈຸບັນ) ເມື່ອຮິດຈະເຣາະຫ໌ ປີທີ່ ຮ.ສ. 80 ກົງກັບປີຄິດສະກາຣາດ**ຄ.ສ.**699 ທ່ານມີຖານະເປັນຕາບີອີນຄົນໜຶ່ງທີ່ມີໂອກາດຮ່ວມສະໄໝກັບຊໍຮາບະຫ໌ບາງຄົນ ເມື່ອທ່ານເກີດມາມີຊໍຮາບະຫ໌ ທີ່ຍັງມີຊີວິດຢູ່ 4 ທ່ານ ຕາມນັກປະຫວັດສາດໄດ້ບັນທຶກໄວ້ ຄື ທ່ານອະນັສ ອິບນຸ ມາລິກ, ອັບດຸລລໍຫ໌ ອິບນຸ ອາບີເອົາຟ, ໄຊດ ອິບນຸ ສະອັດ ແຕ່ທ່ານອະບູຮະນີຟະຫ໌ບໍ່ໄດ້ມີໂອກາດໄດ້ສຶກສາກັບຊໍຮາບະຫ໌ທັ້ງ 4 ໂດຍກົງເນື່ອງຈາກຊໍຮາບະຫ໌ທັ້ງ 4 ໄດ້ເສຍຊີວິດຕັ້ງແຕ່ທ່ານຍັງນ້ອຍ ເຖິງແມ່ນວ່າອະບູຮານີຟະຫ໌ ບໍ່ໄດ້ສຶກສາໂດຍກົງຈາກບັນດາຊໍຮາບະຫ໌ເຫຼົ່ານັ້ນ ແຕ່ໄດ້ສຶກສານໍາອາຈານທີ່ເຄີຍຮຽນນໍາບັນດາຊໍຮາບະຫ໌ທັ້ງ 4 ດັ່ງທີ່ອະບູຮານີຟະຫ໌ໄດ້ກ່າວຢືນຍັນດ້ວຍຕົນເອງ ນອກຈາກທີ່ກ່າວມາແລ້ວ ທ່ານອະບູຮານີຟະຫ໌ມີຄູອາຈານອີກຫຼາຍທ່ານ ເຊັ່ນ ຮໍາມາດ ອິບນຸ ອະບີສຸໄລມານ, ໄຊດ ອິບນຸ ອາລີ ໄຊນຸລອາບີດີນ, ຍະຟັຮ ອັສຊໍດິກ ແລະ ອື່ນໆ ຕໍາລາຂອງທ່ານທີ່ຖືກລວບລວມເປັນເລັ່ມໂດຍລູກສິດຂອງທ່ານມີຊື່ວ່າ ອັລຮິດາຍະຫ໌ ທ່ານອະບູຮານີຟະຫ໌ໄດ້ເສຍຊີວິດ ເມື່ອປີ ຮ.ສ. 150 (ຮິດຈະເຣາະຫ໌) ທ່ານມີອາຍຸ 70 ປີ ສົບຂອງທ່ານໄດ້ຮັບການຝັງຢູ່ທີ່ສຸສານໃນນະຄອນແບກແດກ ປະເທດອີຣັກ

2. **ມັຊຮັບ ມາລິກີ**

ຜູ້ກໍ່ຕັ້ງຄື ອິມ່າມມາລິກ ທ່ານເປັນຊາວອາຣັບ ມີຊື່ເຕັມວ່າອາບູອັບດຸລ ລໍຫ໌ ມາລິກ ອິບນຸ ອະນັສ ອິບນຸ ອາບີອາມີຣ ອັລອັສບາຮີ ທ່ານເກີດທີ່ ນະຄອນມາດີນະຫ໌ ລະຫວ່າງປີ ຮ.ສ. 90-97 ຫຼື ຄ.ສ 708-715ປະຫວັດສາດໄດ້ ບັນທຶກໄວ້ຫລາຍ ລາຍງານດ້ວຍກັນທ່ານອິມ່າມມາລິກ ໄດ້ເສຍຊີວິດ ເມື່ອ ປີ ຮ.ສ. 179ທ່ານມີອາຍຸ 83ປີແລະ ສົບຂອງທ່ານໄດ້ຮັບການຝັງຢູ່ທີ່ສຸສານອັລ ບາກຽະໃກ້ກັບມັສຍິດຂອງທ່ານນະບີ (ຊ.ລ.) ໃນນະຄອນມາດີນະຫ໌ ທ່ານ ເປັນຜູ້ທີ່ສືບເຊື້ອສາຍມາຈາກຊໍຮາບະຫ໌ (ສາວົກ) ແລະໄດ້ຮຽນກັບບັນດາ ຕາບີອີນ (ຜູ້ທີ່ທັນໄດ້ພົບຫຼືຮຽນຮູ້ກັບບັນດາຊໍຮາບະຫ໌) ຫຼາກຫຼາຍ ດໍາລາ ນິຕິສາດອິສລາມ (ຟິກ) ມີຊື່ວ່າ ອັລມຸວັດເຕາະ

3. **ມັຊຮັບ ຊາຟິອີ**

ຜູ້ກໍ່ຕັ້ງຄື ອິມ່າມຊາຟິອີ ຊື່ແທ້ຂອງທ່ານຄື ອະບູອັບດິລລະຫ໌ ມຸຮໍາຫມັດ ບິນ ອິດຣິສ ອັຊຊາຟິອີ ທ່ານເປັນຊາວອາຣັບ ທ່ານເກີດໃນເມືອງກາຊ່າ (ປັດຈຸບັນຢູ່ປາເລສໄຕນ) ເມື່ອປີທີ່ 160 ຫຼັງຈາກການອິຈເຣາະຫ໌ (ການອົບ ພະຍົບຂອງທ່ານສາສະດາໄປເມືອງມາດີນະຫ໌) ກົງກັບ ຄ.ສ. 767 ທ່ານໄດ້ຮັບ ການສຶກສາດ້ານອິສລາມໃນນະຄອນມະດີນະຫ໌ຈາກອາຈານທີ່ມີຊື່ສຽງ ຫຼາຍທ່ານ ໜຶ່ງໃນນັ້ນກໍ່ຄື ອິມ່າມມາລິກ ຜູ້ເປັນຕົ້ນກໍາເນີດຂອງມັສຮັບ ມາລິກີດ້ວຍ ອິມ່າມຊາຟິອີສິ້ນຊີວິດທີ່ປະເທດອີຢິບ ເມື່ອປີ ຮ.ສ. 204 ຕໍາລາ ຂອງທ່ານຄື ອັລອຸມ ແລະ ອັຣຣິຊາລະຫ໌

4. **ມັສຮັບຮໍາບະລີ**

ຜູ້ກໍ່ຕັ້ງຄື ອິມ່າມອະຫມັດ ອິບນຸ ອັລຮໍາບັລ ທ່ານເປັນຊາວອາຣັບເກີດ ທີ່ເມືອງແບກແດກ ປະເທດອີຣັກ ເມື່ອປີ ຮ.ສ. 164 ທ່ານເຄີຍເດີນທາງ ໄປສຶກສາຫາຄວາມຮູ້ດ້ານສາສະໜາອິສລາມຈາກດິນແດນຕ່າງໆຫຼາຍ

ບ່ອນ ອະທິເຊັ່ນ ນະຄອນມັກກະຫ໌, ມະດີນະຫ໌, ເຍເມນ, ນະຄອນກູຟະຫ໌, ແລະ ນະຄອນບັສເຣາະ ໃນປະເທດອີຣັກ ຄູບາອາຈານຂອງທ່ານອິມ່າມ ອະຫມັດ ອິບນຸ ອັລຮໍາບັລທີ່ມີຊື່ສຽງທີ່ສຸດກໍ່ຄື ອິມ່າມຊາຟິອີ ທ່ານໄດ້ສຶກສາກັບອິມ່າມຊາຟິອີເປັນຄັ້ງທໍາອິດທີ່ນະຄອນມັກກະຫ໌ ເມື່ອອິບນຸຮໍາບັລ ໄປບໍາເພັນຮັຈທີ່ນັ້ນໃນຂະນະອິມ່າມຊາຟິອີກໍາຫຼັງສອນຢູ່ໃນມັສຍິດຫະຣອມ ແລະ ອິບນຸຮໍາບັລຍັງໄດ້ໄປສຶກສາກັບທ່ານອິບຣໍຫີມ ອິບນ ຊະ ຍະຫ໌ຍາ ອັລກອດຕອນ ອິມ່າມອະຫມັດຍັງມີຄວາມຕັ້ງໃຈທີ່ຈະໄປສຶກສາກັບອິມ່າມມາລິກ ແຕ່ກັບອິມ່າມມາລິກໄດ້ເສຍຊີວິດໄປກ່ອນ ອິມ່າມອະຫມັດ ອິບນຸ ຮໍາບັລ ໄດ້ເສຍຊີວິດເມື່ອວັນສຸກ ທີ່ 13 ເດືອນຣໍບີອຸລເອົາວັລ ປີ ຮ.ສ. 241 ທີ່ນະຄອນແບກແດກ ແລະ ໄດ້ເຮັດການລະຫມາດຈະນາຊະຫ໌ຂອງທ່ານທີ່ນັ້ນ ຫຼັງຈາກການລະຫມາດວັນສຸກ ເຊິ່ງທ່ານມີອາຍຸ 77 ປີ ທ່ານໄດ້ແຕ່ງຕໍາລາສາສະໜາໄວ້ຫຼາຍ ແຕ່ທີ່ມີຊື່ສຽງຫຼາຍທີ່ສຸດຄື ອັລມຸສນັດ

**ຄໍາຖາມ : ມຸສລິມທັ້ງຫຼາຍຈໍາເປັນທີ່ຈະຕ້ອງຕາມ ຫຼື ສັງກັດມັສຮັບໃດມັສຮັບໜຶ່ງເປັນການສະເພາະເຈາະຈົງຫຼືບໍ່?**

**ຄໍາຕອບ** : ບໍ່ຈໍາເປັນ ເພາະອັລລໍຫ໌ ແລະ ຣໍສູລຂອງພຣະອົງ ບໍ່ໄດ້ກໍານົດໃຫ້ເປັນວາຈິບ (ຂໍບັງຄັບ) ແກ່ມະນຸດຄົນໜຶ່ງຄົນໃດ ໃຫ້ສັງກັດມັສຮັບດ້ວຍມັສຮັບຂອງຄົນໆໜຶ່ງນອກຈາກອິສລາມ ອິມ່າມຕ່າງໆເອງກໍ່ບໍ່ໄດ້ກໍ່ຕັ້ງສໍານັກຂອງຕົນຂຶ້ນມາເພື່ອເຜີຍແຜ່ ແລະ ເຊີນຊວນໃຫ້ມຸສລິມໄປສັງກັດສໍານັກຂອງພວກເຂົາ ແຕ່ແມ່ນວ່າ ມັສຮັບຕ່າງໆລ້ວນເກີດຂຶ້ນມາຫຼັງຈາກນັ້ນ ດ້ວຍເຫດນີ້ລູກສິດ ແລະຜູ້ຕາມອິມ່າມທ່ານນັ້ນໆໄດ້ພາກັນຍຶດຕິດທັດສະນະແນວຄໍາສອນອິມ່າມຂອງຕົນ ແລະ

ປະຕິເສດທັດສະນະຂອງອີມ່າມທ່ານອື່ນໆ ທັ້ງທີ່ອີມ່າມທຸກທ່ານລ້ວນແຕ່ເປັນຜູ້ມີຈິດໃຈເປີດກວ້າງ ແລະ ຍອມຮັບໃນຫຼັກຖານຈາກຫະດິຊ ແລະ ອັລກຸຣອານ ທີ່ນຳມາອະທິບາຍ ບັນຫາຕ່າງໆທີ່ເກີດຂຶ້ນ ຫາກວ່າຫຼັກຖານນັ້ນໆຖືກຕ້ອງ ແລະ ຊັດເຈນກວ່າທັດສະນະຂອງຕົນ ທ່ານອີມ່າມຊາຟີອີໄດ້ເຄີຍກ່າວໄວ້ຄັ້ງໜຶ່ງວ່າ

**إذاصحالحديثفهومذهبي**

**"ຖ້າຫະດິຊຖືກຕ້ອງກວ່ານັ້ນກໍ່ຄືແນວທາງ (ມັສຮັບ) ຂອງຂ້ອຍ"**

ໝາຍຄວາມວ່າ ຖ້າຫາກທ່ານໄດ້ພົບເຈີຫຼັກຖານທີ່ຖືກຕ້ອງ ແລະ ຊັດເຈນ ກວ່າທັດສະນະຂອງຂ້ອຍກໍ່ໃຫ້ລະຖິ້ມທັດສະນະຂອງຂ້ອຍ ແລະ ໄປຍືດເອົາຫຼັກຖານທີ່ຖືກຕ້ອງກວ່າ ເພາະນັ້ນກໍ່ຄືແນວທາງ ຫຼື ມັສຮັບຂອງຂ້ອຍຄືກັນ

ຄຳເວົ້າ ແລະ ການກະທຳທີ່ຄືງກັນນີ້ຈະສາມາດພົບໄດ້ອີກຫຼາຍຄັ້ງຈາກບັນດາອີມ່າມທັ້ງສີ່ ທີ່ສະແດງໃຫ້ເຫັນວ່າມຸສລິມທັ້ງຫຼາຍຄວນຈະຍຶດຖືໃນຫຼັກການທີ່ຖືກຕ້ອງທີ່ສອດຄ້ອງກັບອັລກຸຣອານ ແລະ ຊຸນນະຫ໌ຂອງທ່ານນະບີ (ຊ.ລ) ບໍ່ແມ່ນຍືດເອົາຕົວບຸກຄົນ ຫຼື ສຳນັກຄິດ ແລະ ສຳນັກປະຕິບັດຕ່າງໆ ເຊັ່ນ ມັຊຮັບໃດແບບສະເພາະເຈາະຈົງແຕ່ມຸສລິມຄວນຈະນຳທັດສະນະຈາກນັກປາດເຫຼົ່ານັ້ນມາພິຈາລະນາ ແລະ ຖືປະຕິບັດເປັນເລື່ອງໆໄປ ພາຍຫຼັງຈາກທີ່ບໍ່ພົບຄຳອະທິບາຍທີ່ຊັດເຈນຈາກທັ້ງອັລກຸຣອານ ແລະ ຫະດິຊ ບໍ່ແມ່ນຍຶດຖືຕາມມັສຮັບແບບຫລັບຫູ ຫລັບຕາ ໃນທຸກເລື່ອງໂດຍບໍ່ສຶກສາຈາກຈາກທັ້ງອັລກຸຣອານ ແລະ ຫະດິຊກ່ອນ ເຖິງແມ່ນວ່າຜູ້ທີ່ຕາມມັສຮັບຈະອ້າງວ່າຄຳສອນໃນມັສຮັບຕ່າງໆກໍ່ລ້ວນມີທີ່ມາຈາກຄວາມເຂົ້າໃຈຂອງນັກປາດອິສລາມທີ່ຕີຄວາມມາຈາກອັລກຸຣອານ ແລະ ຫະດິຊກໍ່ຕາມ ວັລລໍຮຸອະລໍາ (ອັລລໍຫ໌ຊົງຮູ້)